ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 174 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2019

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍການປະກາດໃຫ້ສັດຕະຍາບັນ ແກ່ສັນຍາເຂດການຄ້າເສລີ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ ແລະ ສັນຍາການລົງທຶນ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 14;
- ອີງຕາມ ກົດໝາຍວ່າດ້ວຍ ສົນທິສັນຍາ ແລະ ສັນຍາສາກົນ, ສະບັບເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017, ມາດຕາ 44;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 09/ຄປຈ, ລົງວັນທີ 22 ມັງກອນ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຫ້ສັດຕະຍາບັນ ແກ່ສັນຍາເຂດການຄ້າເສລີ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ ແລະ ສັນຍາການລົງທຶນ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ;

**ມາດຕາ 2** ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຄົາລົບ ແລະ ປະຕິບັດສັນຍາສາກົນສະບັບນີ້. ມອບໃຫ້ກະຊວງການຕ່າງປະເທດຈັດຕັ້ງປະຕິບັດຂັ້ນຕອນທາງການທູດ ຕາມກົດໝາຍ ແລະ ລະບຽບການ;

**ມາດຕາ 3** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ